ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຕະຫຼາດຫຼັກຊັບລາວ
LAO SECURITIES EXCHANGE

ເລກທີ 1220/ຕລຊລ

ນະຄອນຫຼວງວຽງຈັນ, ວັນທີ 07 SEP 2026

# ໜັງສືສະເໜີ

ເຖິງ: - ທ່ານ ຜູ້ອຳນວຍການ ບໍລິສັດຫຼັກຊັບ ທຄຕລ-ກທ;

- ທ່ານ ຜູ້ອຳນວຍການ ບໍລິສັດຫຼັກຊັບ ແອລ໌ດີບີ ຈຳກັດຜູ້ດຽວ;
- ທ່ານ ຜູ້ອຳນວຍການ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ ທີ່ນັບຖື,

ເລື່ອງ: ການເຜີຍແຜ່ ແລະ ແຈກຢາຍ "ແບບສອບຖາມຄວາມສົນໃຈໃນການລົງທຶນໃນຜະລິດຕະພັນ ໃບຢັ້ງຢືນສິດໃນຫຼັກຊັບຕ່າງປະເທດ (**Depository Receipt: DR**) ຢູ່ ສປປ ລາວ".

- ອີງຕາມຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຜູ້ຮັບຜິດຊອບຄົ້ນຄວ້າກົນໄກ ແລະ ຄວາມເປັນໄປໄດ້ໃນການສ້າງຜະລິດຕະພັນ ໃບຢັ້ງຢືນສິດໃນຄໍາ, ສະບັບເລກທີ 050/ຕລຊລ, ລົງວັນທີ 03 ກັນຍາ 2025;
- ອີງຕາມ ການປະຊຸມຮ່ວມກັນຂອງຄະນະຄົ້ນຄວ້າຜະລິດຕະພັນໃບຢັ້ງຢືນສິດໃນຄໍາ ໃນວັນທີ 17 ກໍລະກົດ 2026.
- ອີງຕາມ ແຈ້ງຕອບຂອງບໍລິສັດຫຼັກຊັບ ກ່ຽວກັບການປະກອບຄໍາເຫັນໃສ່ຮ່າງແບບສອບຖາມ.

ຕະຫຼາດຫຼັກຊັບລາວ (ຕລຊລ) ຂໍຖືເປັນກຽດສະເໜີມາຍັງທ່ານ ອີງຕາມການປະກອບຄໍາເຫັນຂອງບໍລິສັດຫຼັກຊັບ ຕໍ່ກັບຮ່າງ "ແບບສອບຖາມຄວາມສົນໃຈໃນການລົງທຶນໃນຜະລິດຕະພັນ ໃບຢັ້ງຢືນສິດໃນຫຼັກຊັບຕ່າງປະເທດ (**Depository Receipt: DR**) ຢູ່ ສປປ ລາວ" ທີ່ໄດ້ນໍາສົ່ງຜ່ານມາ, ປັດຈຸບັນ ຕລຊລ ໄດ້ດໍາເນີນການຄົ້ນຄວ້າ, ສັງລວມ ແລະ ປັບປຸງແບບສອບຖາມດັ່ງກ່າວເປັນທີ່ຮຽບຮ້ອຍແລ້ວ. ດັ່ງນັ້ນ, ຕລຊລ ຈຶ່ງຂໍນໍາສົ່ງແບບສອບຖາມສະບັບປັບປຸງ (ຮູບແບບ Google Forms) ແລະ ສະເໜີມາຍັງທ່ານ ເພື່ອຊ່ວຍເຜີຍແຜ່ ແລະ ແຈກຢາຍແບບສອບຖາມດັ່ງກ່າວ ແກ່ມວນຊົນ, ກຸ່ມລູກຄ້າ ແລະ ຜູ້ລົງທຶນ ຜ່ານຊ່ອງທາງສື່ສານຕ່າງໆ ຂອງບໍລິສັດ (ເຊັ່ນ: Website, Facebook Page, Line, Email ຫຼື ຜ່ານນາຍໜ້າຊື້ຂາຍຫຼັກຊັບ/Broker) ເພື່ອໃຫ້ຜູ້ລົງທຶນເຂົ້າຮ່ວມຕອບແບບສອບຖາມຢ່າງກວ້າງຂວາງ. ທັງນີ້, ກໍເພື່ອສໍາຫຼວດຄວາມສົນໃຈຂອງຜູ້ລົງທຶນ ແລະ ສັງລວມຜົນໄດ້ຮັບ ເຂົ້າໃນການກະກຽມຈັດກອງປະຊຸມປຶກສາຫາລືຂອງ ຄະນະຮັບຜິດຊອບຄົ້ນຄວ້າກົນໄກ ແລະ ຄວາມເປັນໄປໄດ້ໃນການສ້າງຜະລິດຕະພັນໃບຢັ້ງຢືນສິດໃນຄໍາ ໃນຕໍ່ໜ້າ. **ກໍານົດໄລຍະເວລາເກັບກໍາຂໍ້ມູນແມ່ນນັບແຕ່ມື້ນີ້ເປັນຕົ້ນໄປ ຫາ ວັນທີ 30 ກັນຍາ 2026.**

ດັ່ງນັ້ນ, ຕລຊລ ຈຶ່ງຂໍຖືເປັນກຽດສະເໜີມາຍັງທ່ານ ເພື່ອພິຈາລະນາ ແລະ ດໍາເນີນການຕາມທາງຄວນດ້ວຍ.

ຜູ້ອຳນວຍການໃຫຍ່

**QR Code ແບບສອບຖາມ:**

https://forms.gle/9DXBnYpq34NwU9vn8

ບໍລິສັດ ຕະຫຼາດຫຼັກຊັບລາວ ຈໍາກັດ
Lao Securities Exchange Co.,Ltd
ນະຄອນຫຼວງວຽງຈັນ

**ສຽວສະຫວາດ ທິລະກຸນ**

*ຜູ້ປະສານງານ:*

*ທ່ານ ນາງ. ຈິລະພອນ ພົມມະຈັນ, ເບີໂທ 020 5422 6519*

*ທ່ານ ນາງ. ສອນເພັດ ສຸດທິພົງ, ເບີໂທ 020 5544 8864*